CLIMATE PROMISE

ກຊສ MONRE

UNDP

# ກອງປະຊຸມເຜີຍແຜ່ວຽກງານ ການປ່ຽນແປງດິນຟ້າອາກາດລະດັບຊາດ

## ວິໄສທັດ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ

**ກະກຽມໂດຍ:** ທ່ານ ນາງ ດາວວິນ ສຸພົນພັກດີ,
ພະແນກ ນະໂຍບາຍ, ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

Federal Ministry for the Environment, Nature Conservation and Nuclear Safety

# ເນື້ອໃນການນຳສະເໜີ

- ບົດບາດຂອງອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ
- ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ
- ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປ່ຽນແປງດິນຟ້າອາກາດ

# ບົດບາດຂອງອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ

ໃນ ສປປ ລາວ ອົງການຈັດຕັ້ງທາງສັງຄົມ ເປັນອົງການຈັດຕັ້ງທີ່ຮັບຮູ້ໂດຍລັດຖະບານແຫ່ງ ສປປ ລາວ ເປັນອົງການຈັດຕັ້ງທີ່ເຮັດວຽກງານ ການຈັດຕັ້ງປະຕິບັດໂຄງການຕ່າງໆ ທີ່ ສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການຫຼຸດຜ່ອນຄວາມທຸກຍາກ.

*ແຫຼ່ງຂໍ້ມູນ: Lao CSO Directory 2022*

# ບົດບາດຂອງອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ

ອົງການຈັດຕັ້ງທາງສັງຄົມ ລວມມີ ສະມາຄົມບໍ່ຫວັງຜົນກຳໄລ (Non-Profit Association or NPA), ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGOs International Non-Government Organizations ), ມູນນິທິຕ່າງໆ (Foundations), ອົງການຈັດຕັ້ງທີ່ເຮັດວຽກເພື່ອຊຸມຊົນ (Community-based Organizations), ວິສາຫະກິດທາງສັງຄົມ ແລະ ກຸ່ມທີ່ບໍ່ເປັນທາງການອື່ນໆ ເຊັ່ນ: ກຸ່ມຊາວກະສິກອນ ແລະ ສະຫະກອນ, ກຸ່ມກອງທຶນໝູນວຽນ ແລະ ອື່ນໆ.

*ແຫຼ່ງຂໍ້ມູນ: Lao CSO Directory 2022*

# ບົດບາດຂອງອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ

## ສະມາຄົມບໍ່ຫວັງຜົນກຳໄລ (Non-Profit Association)

- ເປັນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ເຊິ່ງໄດ້ຮັບການສ້າງຂຶ້ນໂດຍບຸກຄົນ ກຸ່ມບຸກຄົນໃດໜຶ່ງເພື່ອດຳເນີນເປົ້າໝາຍການພັດທະນາ. ດຳລັດ ເລກທີ 238/ລບ ໄດ້ກຳນົດກົດລະບຽບການຄຸ້ມຄອງໃນການສ້າງຕັ້ງ ການດຳເນີນງານ ແລະ ການຄຸ້ມຄອງສະມາຄົມເປັນນິຕິບຸກຄົນທີ່ຖືກຕ້ອງຕາມກົດໝາຍໃນ ສປປ ລາວ.
- ສະມາຄົມບໍ່ຫວັງຜົນກຳໄລ ມີເປົ້າໝາຍເພື່ອເຮັດວຽກເພື່ອຫຼຸດຜ່ອນຄວາມທຸກຍາກ ໂດຍການຮ່ວມມືກັບອົງການຈັດຕັ້ງຂັ້ນທ້ອງຖິ່ນ, ຊຸມຊົນ ແລະ ຄູ່ຮ່ວມພັດທະນາອື່ນໆໃນຫຼາຍຂະແໜງການຕ່າງໆເຊັ່ນ: ການສຶກສາ,ສາທາລະນະສຸກ, ກະສິກຳ, ປ່າໄມ້ ແລະ ອື່ນໆ.

*ແຫຼ່ງຂໍ້ມູນ: Lao CSO Directory 2022*

# ບົດບາດຂອງອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ

## ມູນນິທິ (Foundation)

- ມູນນິທິ ເປັນອົງການທີ່ບໍ່ຫວັງຜົນກຳໄລ ແລະ ມີຈຸດປະສົງເຮັດວຽກເພື່ອຜົນປະໂຫຍດສ່ວນລວມ ທີ່ກ່ຽວຂ້ອງກັບ ຈຸດປະສົງທາງດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສຸຂະພາບ, ກິລາ, ວິທະຍາສາດ, ການກຸສົນມະນຸດສະທຳ ແລະ ຈຸດປະສົງອື່ນໆ.

*ແຫຼ່ງຂໍ້ມູນ: Lao CSO Directory 2022*

# ອົງການຈັດຕັ້ງທາງສັງຄົມ ແລະ ບົດບາດຈັດຕັ້ງທາງສັງຄົມ ໃນ ສປປ ລາວ

## ອົງການຈັດຕັ້ງສາກົນ (International Non-Government Organizations)

- ແມ່ນອົງການຈັດຕັ້ງສາກົນ ຫຼື ອົງການບໍ່ຫວັງຜົນກຳໄລຂອງຕ່າງປະເທດ ທີ່ເຮັດວຽກໃຫ້ການຊ່ວຍເຫຼືອດ້ານການພັດທະນາ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ ໂດຍບໍ່ມີການສະແຫວງຫາຜົນກຳໄລໃດໆ. ອົງການຈັດຕັ້ງສາກົນສະຫນັບສະຫນູນການຈັດຕັ້ງນະໂຍບາຍ ແລະ ຊຸກຍູ້ການມີສ່ວນຮ່ວມ ໃນວຽກງານຕ່າງໆ ເຊັ່ນ: ການສຶກສາ, ການປົກປ້ອງເດັກ, ກະສິກຳ, ສິ່ງແວດລ້ອມ ຫຼື ສຸຂະພາບ ແລະ ອື່ນໆ.

*ແຫຼ່ງຂໍ້ມູນ: Lao CSO Directory 2022*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

- ສປປ ລາວ ໄດ້ຮັບຮອງສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC) ໃນປີ 1995, ອະນຸສັນຍາກຽວໂຕ ປີ 2003 ແລະ ສັນຍາປາຣີໃນ ປີ 2016.
- ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບນຫາການປ່ຽນດິນຟ້າອາກາດ ສະບັບທີ 1 ຖືກຮັບຮອງໃນປີ 2015 ແລະ ສະບັບທີ 2 ຮັບຮອງໃນປີ 2021.
- ສປປ ລາວ ວາງຄາດໝາຍ ເພື່ອບັນລຸເປົ້າຫມາຍການປ່ອຍ ແລະ ການ ດູດຊຶມຊັບ ທາດອາຍເຮືອນແກ້ວຢູ່ ສປປ ລາວ ໃຫ້ເປັນສູນ ໃນປີ 2050 (Net Zero Emissions 2050).

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນດິນຟ້າອາກາດ ສະບັບທີ 2 ປີ 2021 ໄດ້ຍົກລະດັບຄາດໝາຍສູ້ຊິນໃຫ້ສູງຂຶ້ນຕື່ມໂດຍການວາງເງື່ອນໄຂໃນການປ່ອຍທາດອາຍເຮືອນແກ້ວຂອງປະເທດເປັນ ສາມຮູບແບບຄື:

- **ການປ່ອຍທາດອາຍເຮືອນແກ້ວ ແບບທຽບຖານ (baseline scenario)** ແມ່ນກໍລະນີສົມທຽບເພື່ອ ສະແດງໃຫ້ເຫັນລະດັບການປ່ອຍທາດອາຍເຮືອນແກ້ວທີ່ຈະເກີດຂຶ້ນໃນອະນາຄົດຂ້ອນຂ້າງແນ່ນອນຢູ່ແລ້ວ, ຖ້າຫາກບໍ່ມີການດຳເນີນມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວອັນໃດເລີຍ.

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

- **ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂ (unconditional mitigation scenario)** ແມ່ນ ກໍລະນີທີ່ ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ ສປປ ລາວ ມີ ຄວາມພະຍາຍາມໃນ ການດໍາເນີນມາດຕະການ ໂດຍຄໍານຶງເຖິງຊັບພະຍາກອນຕ່າງໆທີ່ຕົນເອງມີ ແລະ ລະດັບການຊ່ວຍເຫຼືອໃນປະຈຸບັນຈາກ ປະເທດທີ່ພັດທະນາແລ້ວ.
- **ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ (conditional mitigation scenario)** ແມ່ນກໍລະນີການເພີ່ມຄວາມພະຍາຍາມສູງຂຶ້ນ ໃນການຫຼຸດຜອ່ນການປ່ອຍ ທາດອາຍເຮືອນແກ້ວ ທີ່ ສປປ ລາວ ຈະສາມາດບັນລຸໄດ້, ຖ້າຫາກໄດ້ຮັບການຊ່ວຍເຫຼືອດ້ານການເງິນ ຈາກບັນດາປະເທດທີ່ພັດທະນາແລ້ວຫຼາຍຂຶ້ນ.

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ (Mitigation) ຮູບແບບການປ່ອຍທາດອາຍເຮືອນແກ້ວ




*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ (Mitigation)

ຄາດຫມາຍສູ້ຊົນ ແລະ ການຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ຮອດປີ 2030

| ຂົງເຂດ | ຄາດໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວ (2020-2030) | ການຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍສະເລ່ຍ ແຕ່ປີ 2020 ຫາ 2030 (kCO2e /ປີ) |
|---|---|---|
| **ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້** | ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍນອນທາດກາກບອນຂອງປ່າ. | 1.100 |
| **ພະລັງງານ:** | | |
| **- ພະລັງງານນ້ຳ** | ເພີ່ມກຳລັງການຜະລິດກະແສໄຟຟ້າພະລັງງານນ້ຳ ພາຍໃນປະເທດໃຫ້ໄດ້ທັງໝົດ 13 GW (ຊົມໃຊ້ພາຍໃນ ແລະ ການສົ່ງອອກ) | 2.500 |
| **- ການປະຢັດພະລັງງານ** | ການນຳໃຊ້ເຕົາປະຢັດ ຈຳນວນ 50.000 ເຕົາ | 50 |
| **- ການຂົນສົ່ງ** | • ຈັດຕັ້ງປະຕິບັດລະບົບການບໍລິການລົດເມດ່ວນໃນນະຄອນຫຼວງວຽງຈັນ ແລະ ການຂົນສົ່ງທີ່ບໍ່ໃຊ້ກົນຈັກ<br>• ເສັ້ນທາງລົດໄຟ ຮ່ວມມື ລາວ-ຈີນ | 25<br>300 |

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ (Mitigation)

ຄາດຫມາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ຮອດປີ 2030

| ຂົງເຂດ | ຄາດໝາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ (2020 - 2030) | ຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວໂດຍສະເລ່ຍ ແຕ່ປີ 2020 ຫາ 2030 (ktCO2e /ປີ) |
|---|---|---|
| ການປ່ຽນແປງການນຳໃຊ້ທີ່ດິນ ແລະປ່າໄມ້ | ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ (ໃຫ້ໄດ້ 16,58 ລ້ານເຮັກຕາ), ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ສົ່ງເສີມການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍມວນທາດກາກບອນຂອງປ່າ. | 45.000 |

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ (Mitigations)

ຄາດຫມາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ຮອດປີ 2030

| | | |
|---|---|---|
| **ພະລັງງານ:** | | |
| - **ພະລັງງານທົດແທນ** | ພະລັງງານແສງຕາເວັນ ແລະ ພະລັງງານລົມ: ໃຫ້ມີ ກໍາລັງຕິດຕັ້ງລວມທັງໝົດ 1GW ໃນທົ່ວປະເທດ | 100 |
| | ຊີວະມວນ: ໃຫ້ມີ ກໍານລັງຕິດຕັ້ງລວມທັງໝົດ 300MW ໃນທົ່ວປະເທດ | 84 |
| - **ຂົນສົ່ງ** | ເພີ່ມການນໍາໃຊ້ພາຫະນະທີ່ແລ່ນດ້ວຍໄຟຟ້າສໍາລັບລົດຈັກ ແລະ ລົດໃຫຍ່ໃຫ້ໄດ້ 30% ທຽບໃສ່ ຈໍານວນພາຫະນະທັງໝົດທົ່ວປະເທດ | 30 |
| | ເພີ່ມອັດຕາສ່ວນຂອງນໍ້າມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການນໍາໃຊ້ນໍ້າມັນເຊື້ອໄຟສໍາລັບຂະແໜງຂົນສົ່ງ | 29 |
| - **ການປະຢັດພະລັງງານ** | ຫຼຸດຜ່ອນການນໍາໃຊ້ພະລັງງານລົງ 10% ເມື່ອທຽບໃສ່ຕາມຈັງຫວະການຂະຫຍາຍຕົວ ຂອງເສດຖະກິດ | 280 |
| **ກະສິກໍາ** | ນໍາໃຊ້ວິທີການບໍລິຫານຈັດການນໍ້າໃນການເຮັດນາເຂົ້າ ຢູ່ເຂດທົ່ງພຽງ ໃນເນື້ອທີ່ 50.000 ເຮັກຕາ | 128 |
| **ສິ່ງເສດເຫຼືອ** | ຈັດຕັ້ງປະຕິບັດໂຄງການຄຸ້ມຄອງຂີ້ເຫຍື້ອ ໃນເຂດຕົວເມືອງແບບຍືນຍົງໃຫ້ໄດ້ ໃນປະລິມານ 500 ໂຕນ/ມື້ | 40 |

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (Adaptation)

ປະກອບມີ:

- ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ແຜນການໃນຕໍ່ໜ້າຮອດປີ 2025.
- ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຢູ່ຂົງເຂດສຳຄັນໃນໄລຍະຍາວຮອດປີ 2030.
- ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ດັ່ງກ່າວໄດ້ເນັ້ນໃຫ້ການສ້າງຄວາມທົນທານໃຫ້ກັບຂະແໜງການທີ່ມີຄວາມບອບບາງຕໍ່ ການປ່ຽນແປງດິນຟ້າອາກາດເຊັ່ນ: ກະສິກຳ, ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ການຂົນສົ່ງ ແລະ ການພັດທະນາຕົວເມືອງ, ສາທາລະນະສຸກ ແລະ ພະລັງງານ.

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ

## ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (Adaptation)

- ແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ (National Adaptation Plan).
- ຍຸດທະສາດການເຕີບໂຕ ສີຂຽວແຫ່ງຊາດ ຮອດປີ 2030.
- ຍຸດທະສາດຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄລຍະ 10 ປີ ແຕ່ 2015-2025.
- ຍຸດທະສາດການ ພັດທະນາຕົວເມືອງຮອດປີ 2030.
- ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດຮອດປີ 2030.

*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານ NDC ຂອງ ສປປ ລາວ



# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປ່ຽນແປງດິນຟ້າອາກາດ

ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມໃນວຽກງານການປ່ຽນແປງດິນຟ້າອາກາດ ແມ່ນມີຄວາມສໍາຄັນໃນການນໍາເອົາຄວາມຫັກສະຄວາມຊໍານານ ແລະ ປະສົບການໃນພື້ນທີ່ ແລະ ຊຸມຊົນທ້ອງຖິ່ນເຂົ້າໄປໃນຂະບວນການຕັດສິນໃຈ, ການສະໜັບສະໜູນດ້ານວິຊາການ, ການສ້າງຈິດສໍານຶກ ແລະ ຄວາມອາດສາມາດ, ແລະ ເສີມສ້າງຄວາມເຂັ້ມແຂງຂອງປະຊາຊົນທີ່ມີຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ.

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມຕໍ່ ວຽກງານການປ່ຽນແປງດິນຟ້າອາກາດ

ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມເຂົ້າໃນການປຶກສາຫາລືແມ່ນມີຄວາມສຳຄັນຫຼາຍ ປະສົບການຂອງອົງການຈັດຕັ້ງທາງສັງຄົມ ໃນວຽກງານການປ່ຽນແປງດິນຟ້າອາກາດມີຄວາມສຳຄັນຫຼາຍໃນການແລກປ່ຽນ ແລະ ແນະນຳຂໍ້ສະເຫນີທີ່ສາມາດສ້າງພື້ນທີ່ການມີສ່ວນຮ່ວມ ໃນການພັດທະນາຄວາມສາມາດ, ພາລະບົດບາດ ແລະ ສົ່ງເສີມການມີສ່ວນຮ່ວມຂອງເຂົາເຈົ້າໃນວຽກງານການປ່ຽນແປງດິນຟ້າອາກາດ.

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປ່ຽນແປງດິນຟ້າອາກາດ

- ແຜນງານ NDC ປີ 2021 ໄດ້ວາງຄາດໝາຍໃນການສ້າງຕັ້ງກົນໄກການປະສານງານໃນລະດັບຊາດຂຶ້ນ ເພື່ອຕິດຕາມການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ການປະກອບສ່ວນການແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ. **ກົນໄກດັ່ງກ່າວຈະລວມເອົາ ບັນດາຜູ້ຕາງໜ້າຈາກຂະແໜງການລັດ, ຄູ່ຮ່ວມພັດທະນາ, ພາກທຸລະກິດ ແລະ ເອກະຊົນ.**
- ຍຸດທະສາດແຫ່ງຊາດການປ່ຽນແປງດິນຟ້າອາກາດ ຮອດປີ 2030 ໄດ້ສຸມໃສ່ການສ້າງການຮ່ວມມື ເພື່ອຂະຫຍາຍ ແລະ ຮັດແໜ້ນການເຊື່ອມໂຍງພາຍໃນ ແລະ ສາກົນ, **ສ້າງການປະສານລະຫວ່າງພາກລັດ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ຊຸມຊົນ, ແລະ ອົງການຈັດຕັ້ງອື່ນໆ** ໃຫ້ມີປະສິດທິຜົນ, ມີຄວາມຮັບຜິດຊອບ, ມີຄວາມກົມກຽວ ແລະ ມີຜົນປະໂຫຍດຮ່ວມກັນ.

*ແຫຼ່ງຂໍ້ມູນ: NDC, MONRE 2021 ແລະ National Strategy on Climate Change*

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປຽນແປງດິນຟ້າອາກາດ

ການຮ່ວມມືການລະຫວ່າງພາກ, ຄູ່ຮ່ວມພັດທະນ ແລະ ອົງການຈັດຕັ້ງສັງຄົມ ໃນການສ້າງຈິດສຳນຶກດ້ານການ ສຶກສາສິ່ງແວດລ້ອມ.

ການສຶກສາ ແລະ ປູກຈິດສຳນຶກດ້ານສິ່ງແວດລ້ອມລາວ (Education and Environment Awareness in Laos or EEAL) ໄດ້ຮັບການສ້າງຕັ້ງຂຶ້ນ ປີ 2019 ໂດຍ GIZ, ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ພ້ອມທັງອົງການຈັດ ຕັ້ງ ທາງສັງຄົມ , ຄະນະວິຊາມະຫາວິທະຍາໄລຊາດລາວ ແລະ ວິສາຫະກິດສັງຄົມ.




*ແຫຼ່ງຂໍ້ມູນ: EEAL, MONRE*

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປຽນແປງດິນຟ້າອາກາດ

EEAL ເຮັດວຽກກັບເຄືອຂ່າຍຂອງ ນັກສຶກສາ, ພະນັກງານລັດ, ຜູ້ນຳອົງການຈັດຕັ້ງທາງສັງຄົມ ແລະ ອາສາສະຫມັກ, ວິສາຫະກິດສັງຄົມ ແລະບໍລິສັດເອກະຊົນ ໃນວຽກງານການສົ່ງເສີມການສຶກສາ ແລະ ປູກຈິດສຳນຶກດ້ານສິ່ງແວດລ້ອມ.



*ແຫຼ່ງຂໍ້ມູນ: NDC, MONRE 2021*

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ວຽກງານການປຽນແປງດິນຟ້າອາກາດ

## ກອງປະຊຸມໂຕະມົນ (RoundTable Meeting Process)

ກອງປະຊຸມໂຕະມົນແມ່ນເປັນເວທີທີ່ຊຸກຍູ້ການຮ່ວມມື, ການປະສານງານ ແລະ ຄວາມເຂົ້າໃຈເຊິ່ງກັນ ແລະ ກັນລະຫວ່າງລັດຖະບານ ແລະ ຄູ່ຮ່ວມມືການພັດທະນາໂດຍການຊຸກຍູ້ການສົນທະນາທີ່ສຳຄັນກ່ຽວກັບວາລະການພັດທະນາຂອງປະເທດ.

**ກອງປະຊຸມໂຕະມົນປະກອບມີພາກລັດຖະບານ, ອົງການພັດທະນາຕ່າງໆ, ອົງການສະຫະປະຊາຊາດ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນເຂົ້າຮ່ວມ ເພື່ອປຶກສາບັນຫາທີ່ສຳຄັນໃນການການພັດທະນາ.**

*ແຫຼ່ງຂໍ້ມູນ: Roundtable Meeting Process*

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ ຕໍ່ ວຽກງານການປ່ຽນແປງດິນຟ້າອາກາດ

## ກອງປະຊຸມໂຕະມົນ

ປະກອບດ້ວຍ 10 ໜ່ວຍງານຂະແໜງການ (Sector Working Groups) ທີ່ເປັນກົນໄກໃນການປະສານງານທີ່ສໍາຄັນສໍາລັບແຕ່ລະຂົງເຂດການພັດທະນາໃນກອງປະຊຸມໂຕະມົນ ທີ່ມີຕ່າງໜ້າຈາກລັດຖະບານ, ບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ຕາງໜ້າຈາກພາກເອກະຊົນ. ເຊິ່ງຫຼາຍຂົງເຂດການພັດທະນາໄດ້ຕິດພັນກັບວຽກງານການປ່ຽນແປງດິນຟ້າອາກາດ.

ອົງການຈັດຕັ້ງທາງສັງຄົມ ໄດ້ເຂົ້າຮ່ວມໃນກອງປະຊຸມໂຕະມົນ ແລະ ໃນໜ່ວຍງານຂະແໜງການ ເພື່ອປຶກສາຫາລື ແລະ ປະກອບຄໍາຄິດເຫັນໃນຂົງເຂດການພັດທະນາທີ່ສໍາຄັນ.

Overview of Sector Working Groups and their Sub-Sector Working Groups




*ແຫຼ່ງຂໍ້ມູນ: Roundtable Meeting Process*

# ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງ ຕໍ່ ຄົມວຽກງານການປຽນແປງ ດິນຟ້າອາກາດ




ໂຄງການ CiSAC ໄດ້ຖືກຈັດຕັ້ງປະຕິບັດໂດຍການຮ່ວມມືລະຫວ່າງກະຊວງສາທາລະນະສຸກ, ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA), ສະມາຄົມສູຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (CHIAS) ແລະ ອົງການແພລນ ສາກົນ ປະຈຳ ສປປ ລາວ ພາຍໃຕ້ການຊີ້ນຳ ແລະ ຫ້ອງການປະສານງານອົງການຈັດຕັ້ງສັງຄົມ (LCCO).

ບັນດາສະມາຄົມທີ່ຕອບສະໜອງໃນໂຄງການນີ້ລວມມີ: ສະມາຄົມແມ່ຍິງຮ່ວມໃຈພັດທະນາ (MHP) ແລະ ສະມາຄົມສົ່ງເສີມຄວາມຮູ້ເພື່ອການພັດທະນາຊົນນະບົດແບບມີສ່ວນຮ່ວມ (CAMKID) ແຂວງບໍ່ແກ້ວ; ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA) ແລະ ເຄືອຂ່າຍເພື່ອການພັດທະນາສັງຄົມ (SODA) ແຂວງຫຼວງນ້ຳທາ; ສະມາຄົມຮ່ວມໃຈພັດທະນາ (SDA) ແລະ ສະມາຄົມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (AMA) ແຂວງຫຼວງພະບາງ; ສະມາຄົມສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາ ແບບຍືນຍົງ (PSNUA) ແລະ ສະມາຄົມຮ່ວມໃຈອາສາສະມັກ ( HJA) ແຂວງ ໄຊຍະບູລີ ; ສະມາຄົມສົ່ງເສີມຄວາມຮູ້ກ່ຽວກັບການຄົ້ນຄວ້າ ແລະ ພັດທະນາຊົນນະບົດ (RRDPA) ແລະ ສະມາຄົມພັດທະນາບົດບາດຍິງຊາຍ (GDA) ແຂວງວຽງຈັນ; ສະມາຄົມພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ (ADWLE) ແລະ ສະມາຄົມສົ່ງເສີມແຮງງານນອກລະບົບ (IWAA) ນະຄອນຫຼວງວຽງຈັນ; ສະມາຄົມສົ່ງເສີມການຮຽນຮູ້ເພື່ອການພັດທະນາ (LDA) ແລະ ສະມາຄົມສົ່ງເສີມທັກສະຊີວິດ ເດັກນ້ອຍ ແລະ ໄວໜຸ່ມ (APPREN) ແຂວງບໍລິຄຳໄຊ ; ສະມາຄົມນ້ຳໃຈຊາວບ້ານ (NCA) ແລະ ສະມາຄົມ ເຄືອຂ່າຍຜູ້ຕິດເຊື້ອເຮສໄອວີເອດ ( APL+) ແຂວງ ຄຳມ່ວນ ; ສະມາຄົມພັດທະນາຊຸມຊົນ (CODA) ແລະ ສະມາຄົມຕະກຽງລາວ (TKL) ແຂວງສະຫວັນນະເຂດ, ແລະ ສະມາຄົມຄົນພິການແຫ່ງຊາດ ສາຂາແຂວງຈຳປາສັກ (LDPA.CPS) ແລະ ສະມາຄົມພັດທະນາຊຸມຊົນເມືອງໂຂງ (KCDA) ແຂວງຈຳປາສັກ.

# ຂອບໃຈ